Washington State Department of Social & Health Services
*Transforming lives*

# ໃບຕົກລົງສັນຍາຂອງການຍິນຍອມເຣື່ອງການໝົດສິດ

## ສຳລັບໂຄງການຊ່ວຍເຫລືອອາຫານຂອງຣັດວໍຊິງຕັນ

## Disqualification Consent Agreement

| ເລກ OFA | ຊື່ຂອງຜູ້ຮັບ | ເລກ SSN ຂອງຜູ້ຮັບ | ວັນເກີດຂອງຜູ້ຮັບ | ເລກ IDຂອງຜູ້ຮັບ |
|---|---|---|---|---|
| | | | | |

ຂ້າພະເຈົ້າ,____________________________________________________________, ເຂົ້າໃຈວ່າ:
ຊື່, ຊື່ກາງ, ນາມສະກຸນ

**ຖ້າຫາກວ່າບຸກຄົນຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວໜ້າຄອບຄົວ, ຫົວໜ້າຄອບຄົວຍັງຈະຕ້ອງເຊັນຊື່ໃສ່ໃບຕົກລົງສັນຍາຂອງການຍິນຍອມເຣື່ອງການໝົດສິດ ຕາມທີ່ຖືກກ່າວໄວ້ຢູ່ໃນກົດໝາຍ 7 CFR 273.16(h)(I)(ii)(A).**

ຂ້າພະເຈົ້າ,____________________________________________________________, ເຂົ້າໃຈວ່າ:
ຊື່, ຊື່ກາງ, ນາມສະກຸນຂອງຫົວໜ້າຄອບຄົວ

1. ຂ້າພະເຈົ້າເຊັນຊື່ໃສ່ໃບຕົກລົງສັນຍາຂອງການຍິນຍອມເຣື່ອງການໝົດສິດເພື່ອວ່າຈະສະລະສິດທິຂອງຂ້າພະເຈົ້າໃນການຟັງເຣື່ອງການໝົດສິດຈາກອຳນາດການປົກຄອງ (ADH) ພາຍໃຕ້ກົດໝາຍ WAC 388-446-0015 ແລະ ຮັບເອົາຣະຍະເວລາຂອງການໝົດສິດພາຍໃຕ້ກົດໝາຍ WAC 388-446-0020. ຂ້າພະເຈົ້າເຂົ້າໃຈວ່າໂດຍການສະລະສິດທິໃນການຟັງເຣື່ອງ ADH ອັນນີ້ແລະ ການຮັບເອົາການໝົດສິດ, ຂ້າພະເຈົ້າ**ຈະບໍ່** ຖືກສົ່ງຕໍ່ໄປຫາການຕັດສິນລົງໂທດທາງກົດໝາຍອາຍາ.
2. ຂ້າພະເຈົ້າບໍ່ໄດ້ຖືກພົບວ່າກະທຳຜິດໃນການສະເນີໃຫ້ເຫັນ ຫລື ການສໍ້ໂກງທາງກົດໝາຍແພ່ງ ຫລື ກົດໝາຍອາຍາ. ເຖິງຢ່າງໃດກໍຕາມ, ເມື່ອຂ້າພະເຈົ້າເຊັນຊື່ໃສ່ໃບຕົກລົງສັນຍາໃບນີ້,ຂ້າພະເຈົ້າຈະບໍ່ໄດ້ຮັບການຊ່ວຍເຫລືອອາຫານສຳລັບຂ້າພະເຈົ້າເອງ ແລະ ໜ່ວຍຮັບການຊ່ວຍເຫລືອຂອງຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອອາຫານເປັນຈຳນວນຕ່ຳກວ່າເມື່ອຂ້າພະເຈົ້າຖືກຕັດສິດ.
3. ເມື່ອຂ້າພະເຈົ້າເຊັນຊື່ໃສ່ໃບຕົກລົງສັນຍາຂອງການຍິນຍອມເຣື່ອງການໝົດສິດໃບນີ້,ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າຈະຖືກຕັດສິດເປັນເວລາ:
   ☐ 12 ເດືອນ ☐ 24 ເດືອນ ☐ ສິບ (10) ປີ ☐ ຢ່າງຖາວອນ
   ອັນນີ້ເປັນຂອງຂ້າພະເຈົ້າ: ☐ ການລ່ວງລະເມີດທຳອິດ; ☐ ການລ່ວງລະເມີດທີສອງ; ☐ ການລ່ວງລະເມີດທີສາມ; ຫລື
   ☐ ຂ້າພະເຈົ້າໄດ້ຮັບການຊ່ວຍເຫລືອອາຫານຊ້ຳກັນຈາກຫ້ອງການ ຫລື ຣັດຫລາຍກວ່າບ່ອນນຶ່ງ.
4. ຕາມທີ່ຖືກກ່າວໄວ້ຢູ່ໃນກົດໝາຍ 7 CFR 273.18 (a)(4), ສະມາຊິກຜູ້ໃຫຍ່ທີ່ຍັງເຫລືອຢູ່ທຸກໆຄົນຂອງໜ່ວຍຮັບການຊ່ວຍເຫລືອຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າຮັບຜິດຊອບທີ່ຈະຈ່າຍຄືນໃນເງິນຈ່າຍເກີນສຳລັບການຊ່ວຍເຫລືອເຫລົ່ານີ້.

☐ **ຂ້າພະເຈົ້າບໍ່ປາກເຊັນຊື່ໃສ່ໃບຟອມໃບນີ້. ຂ້າພະເຈົ້າເຂົ້າໃຈວ່າໂດຍການບໍ່ເຊັນຊື່ໃສ່ໃບຟອມໃບນີ້, ຂ້າພະເຈົ້າຈະຖືກສົ່ງຕໍ່ໄປເອົາການຟັງເຣື່ອງການໝົດສິດຈາກອຳນາດການປົກຄອງ (ADH) ແລະ ຍັງອາດຈະຖືກສົ່ງຕໍ່ໄປເອົາການລົງໂທດດ້ານກົດອາຍາອີກດ້ວຍ.**

### ການອະທິບາຍຂອງສິດທິຕາມຣັດຖະທັມມະນູນຂອງທ່ານ

ກ່ອນທີ່ທ່ານຈະຖືກສອບຖາມ, ທ່ານຈະຖືກແຈ້ງບອກກ່ຽວກັບສິດທິຂອງທ່ານ, ດັ່ງຕໍ່ລົງໄປນີ້:

1. ທ່ານມີສິດທີ່ຈະມິດຢູ່;
2. ທຸກໆຢ່າງທີ່ທ່ານເວົ້າອອກມາຈະຖືກໃຊ້ໃສ່ທ່ານຢູ່ໃນສານແຫ່ງກົດໝາຍ;
3. ທ່ານມີສິດຢູ່ໃນເວລານີ້ທີ່ຈະມີທະນາຍຄວາມຊຶ່ງທ່ານເລືອກເອົາເອງ ແລະ ໃຫ້ເຂົາເຈົ້າມາປາກົດຕົວກ່ອນ ແລະ ໃນຣະຫວ່າງການສອບຖາມ ຫລື ການໃຫ້ຄຳແຈ້ງການແນວໃດແນວນຶ່ງ;
4. ຖ້າຫາກວ່າທ່ານບໍ່ສາມາດຈ່າຍຄ່າທະນາຍຄວາມໄດ້, ທ່ານມີສິດທີ່ຈະໄດ້ຄົນນຶ່ງຖືກແຕ່ງຕັ້ງໃຫ້ທ່ານໄດ້ໂດຍສານໂດຍບໍ່ຄິດຄ່າແນວໃດນຳທ່ານ ແລະ ທີ່ຈະໃຫ້ເຂົາເຈົ້າມາປາກົດຕົວກ່ອນ ແລະ ໃນຣະຫວ່າງການສອບຖາມ ຫລື ການໃຫ້ຄຳແຈ້ງການແນວໃດແນວນຶ່ງ;
5. ທ່ານມີສິດທີ່ຈະໃຊ້ສິດທິຂ້າງເທິງນີ້ແນວໃດແນວນຶ່ງໄດ້ໃນທຸກໆເວລາກ່ອນ ແລະ ໃນຣະຫວ່າງການສອບຖາມ ຫລື ການໃຫ້ຄຳແຈ້ງການແນວໃດແນວນຶ່ງ.

### ຄຳເຕືອນເຣື່ອງການປັບໄໝລົງໂທດຂອງໂຄງການຊ່ວຍເຫລືອອາຫານ

**ພາຍໃຕ້ກົດໝາຍ WAC 388-446-0020, ບຸກຄົນຈະບໍ່ໄດ້ຮັບການຊ່ວຍເຫລືອອາຫານເປັນເວລາ:**

**<u>ນຶ່ງປີ</u>** ສຳລັບການລ່ວງລະເມີດໂດຍຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານ ຫລື ໂຄງການຊ່ວຍເຫລືອອາຫານການກິນເພີ້ມເຕີມ (SNAP);

**<u>ສອງປີ</u>** ສຳລັບການລ່ວງລະເມີດດັ່ງນັ້ນເທື່ອທີສອງ; ຫລື ການຕັດສິນລົງໂທດເທື່ອທຳອິດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານ ຫລື ການຊ່ວຍເຫລືອ SNAP ສຳລັບຫາດຢາເສພຕິດ;

**<u>ສິບປີ</u>** ສຳລັບການເອົາລາຍຣະອຽດໃຫ້ໂດຍຮູ້ຈັກດີກ່ຽວກັບບັດປະຈຳຕົວ ຫລື ບ່ອນຢູ່ທີ່ບໍ່ຖືກຕ້ອງ ເພື່ອຈະໄດ້ຮັບການຊ່ວຍເຫລືອອາຫານຊ້ຳກັນ;

**<u>ຕະລອດຊີວິດ</u>** ສຳລັບ:
ການລ່ວງລະເມີດຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານຫລື ການຊ່ວຍເຫລືອ SNAP ເທື່ອທີສາມ;
ການຕັດສິນລົງໂທດເທື່ອທີສອງສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບຫາດຢາເສພຕິດ;
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບປືນ, ກະສຸນ, ຫລື ຣະເບີດ; ຫລື
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານທີ່ມີມູນຄ່າ $500 ຫລື ຫລາຍກວ່າ.

**ບຸກຄົນຜູ້ທີ່ລ່ວງລະເມີດໂດຍຮູ້ຈັກດີ ແລະ ໂດຍເຈຕະນາໃນກົດຣະບຽບຂອງການຊ່ວຍເຫລືອອາຫານສາມາດຖືກຕັດສິນລົງໂທດ ແລະ ຖືກປັບໄໝຮອດ $250,000 ຫລື ຂັງຄຸກຮອດຊາວປີ ຫລື ທັງສອງຢ່າງ. ເຂົາເຈົ້າຍັງຈະຖືກຕັດສິນລົງໂທດອີກດ້ວຍພາຍໃຕ້ກົດໝາຍຂອງຣັດຖະບານກາງອື່ນໆທີ່ກ່ຽວຂ້ອງນຳ.**

| ລາຍເຊັນຂອງບຸກຄົນຜູ້ທີ່ໝົດສິດ | ວັນທີ | ລາຍເຊັນຂອງຫົວໜ້າຄອບຄົວ (ຖ້າຫາກວ່າຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວໜ້າຄອບຄົວ) | ວັນທີ |
|---|---|---|---|
| | | | |